**ວັນອາທິດທີ 11 ມິຖຸນາ 2023**

**ສົມໂພດພຣະກາຍແລະພຣະໂລຫິດຂອງພຣະເຢຊູເຈົ້າ**



**ພຣະວໍລະສານໂດຍນັກບຸນຢວງ 6, 51-59**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວກັບມະຫາຊົນຊາວຢູເດວວ່າ: "ເຮົາແມ່ນປັງຊົງຊີວິດທີ່ລົງມາຈາກສະຫວັນ, ຜູ້ໃດຮັບກິນປັງນີ້ຈະມີຊີວິດນິລັນດອນ ແລະປັງທີ່ເຮົາຈະປະທານເພື່ອບັນດານຊີວິດແກ່ໂລກນັ້ນແມ່ນເນື້ອຂອງເຮົາເອງ". ພວກຢູເດວຈຶ່ງຖຽງກັນວ່າ: "ຄົນນີ້ຈະໃຫ້ເນື້ອຂອງຕົນເປັນອາຫານໃຫ້ເຮົາກິນໄດ້ຢ່າງໃດ?" ພຣະເຢຊູເຈົ້າຊົງກ່າວວ່າ: "ເຮົາບອກພວກເຈົ້າເປັນຄວາມຈິງວ່າ ຖ້າພວກເຈົ້າບໍ່ກິນເນື້ອບຸດມະນຸດແລະດື່ມໂລຫິດຂອງພຣະອົງ ພວກເຈົ້າກໍຈະບໍ່ມີຊີວິດຢູ່ໃນຕົວພວກເຈົ້າ. ຜູ້ໃດກິນເນື້ອຂອງເຮົາແລະດື່ມໂລຫິດຂອງເຮົາ ຜູ້ນັ້ນມີຊີວິດນິລັນດອນແລ້ວເຮົາເອງຈະໃຫ້ເຂົາກັບເປັນຄືນມາໃນວັນສິ້ນໂລກ. ເນື້ອຂອງເຮົາແມ່ນອາຫານແທ້ ແລະໂລຫິດຂອງເຮົາແມ່ນເຄື່ອງດື່ມແທ້. ຜູ້ໃດກິນເນື້ອຂອງເຮົາແລະດື່ມໂລຫິດຂອງເຮົາ ຜູ້ນັ້ນຢູ່ໃນເຮົາແລະເຮົາກໍສະຖິດຢູ່ໃນຜູ້ນັ້ນດ້ວຍ.

ພຣະບິດາຜູ້ຊົງໃຊ້ເຮົາມາເປັນຜູ້ຊົງຊີວິດແລະເຮົາເອງກໍມີຊີວິດຍ້ອນພຣະບິດາແນວໃດ ຜູ້ທີ່ຮັບເຮົາເປັນອາຫານກໍມີຊີວິດຍ້ອນເຮົາແນວນັ້ນ. ນີ້ແມ່ນປັງທີ່ລົງມາຈາກສະຫວັນ ບໍ່ແມ່ນຄືມານນາທີ່ບັນພະບຸລຸດຂອງພວກເຈົ້າໄດ້ຮັບກິນແລ້ວກໍຍັງຕ້ອງຕາຍ, ຜູ້ກິນປັງນີ້ຈະມີຊີວິດຢູ່ຕະຫລອດນິລັນດອນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢຮ 6, 51-58**

ທຸກປີ, ພຣະກຣິສຕະຈັກໄດ້ມີໂອກາດໃຫ້ພວກເຮົາໄດ້ອ່ານແລະລຳເພິງເຖິງເຫດການຊຶ່ງພຣະເຈົ້າໄດ້ປົດປ່ອຍຊົນຊາດຂອງພຣະອົງອອກຈາກການເປັນຂ້ອຍທາດຂອງປະເທດເອຢິບແລະນຳພວກເຂົາເຂົ້າໃນທີ່ປ່ຽວເປັນເວລາ 40 ປີ. ໃນໄລຍະເວລານີ້ພຣະອົງໄດ້ສັ່ງສອນແລະລ້ຽງເກືອປະຊາກອນຂອງພຣະອົງດ້ວຍວາຈາແລະມານນາທີ່ລົງມາຈາກຟ້າ. ແຕ່ພວກເຂົາກໍບໍ່ຮູ້ວ່າສິ່ງນັ້ນແມ່ນຫຍັງ.

ໃນພຣະທຳໃໝ່, ພຣະເຢຊູເຈົ້າກໍໄດ້ລ້ຽງເກືອຝູງຊົນເປັນຈຳນວນຫລາຍໃນທີ່ປ່ຽວເຊັ່ນດຽວກັນ. ແຕ່ສິ່ງທີ່ແປກໃໝ່ໃນທີ່ນີ້ຄື ພຣະອົງໄດ້ໄຂສຳແດງໃຫ້ຝູງຊົນແລະພວກລູກສິດຮູ້ວ່າ: “ພຣະອົງເອງແມ່ນປັງຊົງຊີວິດທີ່ມາຈາກສະຫວັນ. ຜູ້ໃດຮັບກິນປັງນີ້ຈະມີຊີວິດນິລັນດອນ. ເພາະປັງນີ້ແມ່ນເນື້ອກາຍຂອງພຣະອົງ”. ຫລາຍຄົນເມື່ອຟັງພຣະເຢຊູເຈົ້າກ່າວດັ່ງນີ້ກໍບໍ່ເຂົ້າໃຈແລະໜີຈາກພຣະອົງໄປ. ແມ່ນກະທັ່ງພວກລູກສິດຂອງພຣະອົງກໍຢາກປະພຣະອົງໄປດ້ວຍ. ເພາະພວກເຂົາເວົ້າວ່າ: ຄົນຜູ້ນີ້ຈະໃຫ້ເນື້ອຂອງຕົນເປັນອາຫານໃຫ້ພວກເຮົາກິນໄດ້ຢ່າງໃດ?

ຄຳຖາມນີ້ບໍ່ພຽງແຕ່ເປັນຄຳຖາມຂອງພວກຢູເດວໃນສະໄໝພຣະເຢຊູເຈົ້າເທົ່ານັ້ນ ແຕ່ກໍເປັນຄຳຖາມສຳລັບພວກເຮົາຜູ້ເປັນສິດຂອງພຣະອົງໃນປັດຈຸບັນນີ້ດ້ວຍ. ເພາະແຜ່ນປັງທີ່ພວກເຮົາກິນໃນມິຊຊາຈະເປັນເນື້ອແລະໂລຫິດຂອງພຣະເຢຊູເຈົ້າໄດ້ຢ່າງໃດ? ເຮັດແນວໃດພຣະເຢຊູເຈົ້າຜູ້ເປັນພຣະເຈົ້າຈະມາປະທັບຢູ່ໃນແຜ່ນປັງນ້ອຍໆນີ້ໄດ້? ພວກເຮົາຈະພົບກັບຄຳຕອບຂອງຄຳຖາມເຫລົ່ານີ້ໄດ້ຢູ່ໃສ? ວັນນີ້, ຄຳຕອບຂອງຄຳຖາມເຫລົ່ານີ້ໄດ້ອອກມາຈາກປາກຂອງນັກບຸນເປໂຕວ່າ: “ໂອພຣະອົງເຈົ້າ, ພວກຂ້ານ້ອຍເຊື່ອແລະຮູ້ວ່າພຣະອົງແມ່ນຜູ້ສັກສິດຂອງພຣະເຈົ້າ” (ຢຮ 6, 69). ເພາະມີແຕ່ຄວາມເຊື່ອເທົ່ານັ້ນທີ່ຈະທຳໃຫ້ພວກເຮົາເຂົ້າໃຈສິ່ງທີ່ພຣະເຢຊູເຈົ້າໄຂສຳແດງ. ແລະມີແຕ່ຄວາມເຊື່ອເທົ່ານັ້ນທີ່ທຳໃຫ້ພວກເຮົາຮູ້ວ່າປັງທີ່ພວກເຮົາຮັບກິນນັ້ນແມ່ນພຣະກາຍແລະພຣະໂລຫິດຂອງພຣະເຢຊູເຈົ້າ. ດັ່ງນັ້ນ, ເມື່ອພຣະສົງກ່າວວ່າ: “ນີ້ແມ່ນພຣະກາຍພຣະກຣິສໂຕເຈົ້າ”. ພວກເຮົາຈຶ່ງຢືນຢັນຄວາມເຊື່ອດ້ວຍການກ່າວຄຳວ່າ: “ອາແມນ” ອັນມີຄວາມໝາຍ “ໂດຍຂ້ານ້ອຍເຊື່ອ”.

ຂໍໃຫ້ງານສົມໂພດພຣະກາຍແລະພຣະໂລຫິດຂອງພຣະເຢຊູເຈົ້ານີ້ຊ່ວຍພວກເຮົາໃຫ້ເຂົ້າໃຈແລະເຊື່ອໃນພຣະອົງຫລາຍຂຶ້ນ. ເປັນຕົ້ນໃນເວລາພວກເຮົາຮັບເອົາພຣະກາຍຂອງພຣະອົງເຂົ້າມາໃນຈິດໃຈພວກເຮົາ. ເພື່ອພວກເຮົາຈະໄດ້ສະໜິດສຳພັນແລະເປັນໜຶ່ງດຽວກັບພຣະອົງຕະຫລອດໄປ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ